**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ ຈຳປາສັກ

ເລກທີ.....945...../ຈຂ.ຈສ

ແຂວງຈຳປາສັກ, ວັນທີ....29....ກັນຍາ 2017

# ຂໍ້ຕົກລົງ

## ວ່າດ້ວຍ ການອະນຸມັດຮັບຮອງເອົາສະຖານບູຮານ ໜອງດິນຈີ່ ເປັນມໍລະດົກທາງດ້ານວັດທະນະທຳ ຂັ້ນແຂວງ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ໝວດທີ 4 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າແຂວງ.
- ອີງຕາມ ກົດໝາຍວ່າດ້ວຍມໍລະດົກແຫ່ງຊາດ(ສະບັບປັບປຸງ) ເລກທີ 022/ສພຊ, ລົງວັນທີ 24/12/2013.
- ອີງຕາມ ໜັງສືສະເໜີຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ສະບັບເລກທີ 835/ຖວທ.ຈສ, ລົງວັນທີ 20/09/2017.

**ເຈົ້າແຂວງ ຈຳປາສັກ ອອກຂໍ້ຕົກລົງ:**

**ມາດຕາ 1** ຮັບຮອງເອົາສະຖານບູຮານ ໜອງດິນຈີ່ ລວມທັງຮ່ອງຮອຍທີ່ໄຫວ້ ແລະ ກຳນົດຂອບເຂດພື້ນທີ່ສະຖານບູຮານ ຈຳນວນປະມານ 170 ເຮັກຕາ(ໜຶ່ງຮ້ອຍເຈັດສິບເຮັກຕາ ຖ້ວນ), ຕັ້ງຢູ່ເຂດບ້ານໜອງຫອຍ, ເມືອງ ໂພນທອງ, ແຂວງ ຈຳປາສັກ ໃຫ້ເປັນມໍລະດົກທາງດ້ານວັດທະນະທຳ ຂັ້ນແຂວງ.

**ມາດຕາ 2** ມອບໃຫ້ພະແນກຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວແຂວງ ເປັນເຈົ້າການປະສານສົມທົບກັບຫ້ອງການຖະແຫຼງຂ່າວ ວັດທະນະທຳແລະທ່ອງທ່ຽວເມືອງໂພນທອງ ແລະ ພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດໃຫ້ຖືກຕ້ອງສອດຄ່ອງຕາມລະບຽບກົດໝາຍ.

**ມາດຕາ 3** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ**

ບົວສອນ ວົງສອງຄອນ